# ຄຳຮ້ອງສະໝັກລົງທະບຽນອອກສຽງເລືອກຕັ້ງຂອງລັດມິນນິໂຊຕາ

**ສະໝັກອອນລາຍທີ່ mnvotes.gov,ຫຼືກອກຂໍ້ມູນໃນລາຍການທີ່ 1 ເຖິງ 7 ຂອງແບບຟອມນີ້ໃຫ້ສົມບູນ ກະລຸນາຂຽນໃຫ້ຈັດເຈນ**

## ຂໍ້ມູນສ່ວນບຸກຄົນແລະຄຸນສົມບັດ

**1** ທ່ານເປັນພົນລະເມືອງຂອງສະຫະລັດອະເມລິກາບໍ່? ☐ ແມ່ນ ☐ ບໍ່ແມ່ນ

**2** ທ່ານຈະມີອາຍຸຢ່າງນ້ອຍ 18ປີໃນວັນເລືອກຕັ້ງຫຼືກ່ອນວັນເລືອກຕັ້ງ? ☐ ແມ່ນ ☐ ບໍ່ແມ່ນ

**ຖ້າທ່ານໝາຍ "ບໍ່ແມ່ນ" ຕໍ່ຄຳຖາມເຫຼົ່ານີ້ຂໍ້ໃດຂໍ້ໜຶ່ງ ທ່ານບໍ່ຕ້ອງກອກແບບຟອມນີ້ຕໍ່ໃຫ້ສຳເລັດ**

**ຜູ້ລົງຄະແນນສຽງແບບບໍ່ໄປລົງຄະແນນສຽງດ້ວຍຕົນເອງແບບຖາວອນ**

**ໝາຍເຫດ: ພາກສ່ວນນີ້ແມ່ນທາງເລືອກ ບໍ່ຕ້ອງເຮັດກໍ່ໄດ້**
ຂ້າພະເຈົ້າຮ້ອງຂໍໃຫ້ສົ່ງບັດລົງຄະແນນສຽງແບບບໍ່ໄປລົງຄະແນນສຽງດ້ວຍຕົນເອງມາທາງໄປສະນີທີ່ຢູ່ທີ່ຂ້າພະເຈົ້າອາໄສຢູ່ (ເຮືອນຢູ່ອາໄສ) ກ່ອນການເລືອກຕັ້ງແຕ່ລະຄັ້ງທີ່ຂ້າພະເຈົ້າມີສິດລົງຄະແນນສຽງ. ແມ່ນແລ້ວ ☐

**3**

| ນາມສະກຸນຫຼືຊື່ນາມສະກຸນ | ຊື່ | ຊື່ກາງ | ຊື່ຕໍ່ທ້າຍ (ຈູເນຍ, ຊີເນຍ, ທີ່ສອງ, ທີ່ສາມ) |
|---|---|---|---|
| | | | |

**4**

| ທີ່ຢູ່ຂອງທ່ານ (ບ່ອນຢູ່) | ເລກອາພາດເມັນ | ເມືອງ | ລະຫັດໄປສະນີ |
|---|---|---|---|
| | | | |

| ຖ້າຫາກວ່າບໍ່ສາມາດສົ່ງໄປສະນີໄປຫາທີ່ທີ່ຢູ່ຂ້າງເທິງ ກະລຸນາໃຫ້ພີໂອບອກ (P.O. Box) | ເມືອງ | ລະຫັດໄປສະນີ |
|---|---|---|
| | | |

ຖ້າທ່ານບໍ່ມີທີ່ຢູ່ອາໄສແມ່ນທີ່ຢູ່ທາງໄປສະນີ, ໃຫ້ອະທິບາຍບ່ອນທີ່ທ່ານອາໄສຢູ່, ໂດຍມີລາຍລະອຽດພຽງພໍທີ່ເຂດການລົງຄະແນນສຽງຂອງທ່ານສາມາດຕັດສິນກຳນົດໄດ້.

**5**

| ວັນເດືອນປີເກີດ (ບໍ່ແມ່ນວັນທີໃນມື້ນີ້) | ເຂດການສຶກສາ (ຖ້າຮູ້) | ຄາວຕີ້ບ່ອນທີ່ທ່ານອາໄສຢູ່ |
|---|---|---|
| | | |

| ເບີໂທລະສັບ | ອີເມວ |
|---|---|
| | |

**6**

ໝາຍຊ່ອງດຽວແລະບອກຈຳນວນທີ່ກ່ຽວຂ້ອງກັບທ່ານ:

☐ ຂ້າພະເຈົ້າມີໃບຂັບຂີ່ຂອງລັດມິນນິໂຊຕາອອກໃຫ້ຫຼືບັດປະຈຳຕົວຂອງລັດມິນນິໂຊຕາໝາຍເລກ: ☐☐☐☐☐☐☐☐☐☐☐☐☐

☐ ຂ້າພະເຈົ້າບໍ່ມີໃບຂັບຂີ່ທີ່ລັດມິນນິໂຊຕາອອກໃຫ້ ບັດປະຈຳຕົວທີ່ລັດມິນນິໂຊຕາອອກໃຫ້ ເລກສີ່ໂຕສຸດທ້າຍປະກັນສັງຄົມຂອງຂ້າພະເຈົ້າແມ່ນ: XXX-XX-☐☐☐☐

☐ ຂ້າພະເຈົ້າບໍ່ມີໃບຂັບຂີ່ທີ່ລັດມິນນິໂຊຕາອອກໃຫ້, ບໍ່ມີບັດປະຈຳຕົວທີ່ລັດມິນນິໂຊຕາອອກໃຫ້ ຫຼືເລກປະກັນສັງຄົມ

**ການປ່ຽນແປງການລົງທະບຽນ** - ປະຈຸບັນນີ້ທ່ານໄດ້ລົງທະບຽນໂດຍໃຊ້ຊື່ຫຼືທີ່ຢູ່ທີ່ແຕກຕ່າງຈາກນີ້ບໍ່?

| ນາມສະກຸນແຕ່ກ່ອນ | ຊື່ແຕ່ກ່ອນ | ຊື່ກາງແຕ່ກ່ອນ |
|---|---|---|
| | | |

| ທີ່ຢູ່ກ່ອນໜ້ານີ້ບ່ອນທີ່ທ່ານໄດ້ລົງທະບຽນຫຼ້າສຸດ | ເມືອງ | ລັດ | ລະຫັດໄປສະນີ |
|---|---|---|---|
| | | | |

## ອ່ານແລະເຊັນຊື່ຖ້າທຸກພາກສ່ວນນຳໃຊ້ກັບທ່ານເທົ່ານັ້ນ

**7** ຂ້າພະເຈົ້າຂໍຢັ້ງຢືນວ່າຂ້າພະເຈົ້າ:

- ຈະມີອາຍຸຢ່າງນ້ອຍ 18ປີໃນມື້ວັນທີ່ເລືອກຕັ້ງ;
- ເປັນພົນລະເມືອງຂອງສະຫະລັດອະເມລິກາ;
- ຈະໄດ້ອາໄສຢູ່ໃນລັດມິນນິໂຊຕາ,20 ມື້ກ່ອນວັນເລືອກຕັ້ງ;
- ຍັງຢູ່ທີ່ເຮືອນຢູ່ອາໄສຫຼືສະຖານທີ່ທີ່ລະບຸໄວ້ໃນແບບຟອມລົງທະບຽນ;
- ບໍ່ໄດ້ຢູ່ພາຍໃຕ້ການປົກຄອງຕາມຄຳສັ່ງສານທີ່ສານສັ່ງຍົກເລີກສິດທີ່ລົງຄະແນນສຽງຂອງຂ້າພະເຈົ້າ;
- ຍັງບໍ່ທັນໄດ້ຖືກຄຳສັ່ງສານໃຫ້ເປັນຄົນໄຮ້ຄວາມສາມາດທີ່ຈະລົງຄະແນນສຽງ;
- ມີສິດທີ່ລົງຄະແນນສຽງເພາະວ່າ, ຖ້າວ່າຂ້າພະເຈົ້າໄດ້ຮັບການຕັດສິນໂທດຖານມີໂທດໜັກ, ແລ້ວຄຳຕັດສິນຄວາມຜິດທາງອາຍາຂອງຂ້າພະເຈົ້າໄດ້ໝົດອາຍຸແລ້ວ (ໄດ້ສຳເລັດສົມບູນແລ້ວ) ຫຼື ຂ້າພະເຈົ້າໄດ້ຮັບການປ່ອຍໃຫ້ພົ້ນໂທດຂອງຂ້າພະເຈົ້າ;
- ໄດ້ອ່ານແລະເຂົ້າໃຈຂໍ້ຄວາມນີ້: ຂໍ້ມູນຂ້າງເທິງນີ້ແມ່ນຖືກຕ້ອງ, ແລະຂ້າພະເຈົ້າເຊັນຊື່ລົງນາມແບບຟອມຄຳຮ້ອງສະໝັກນີ້ພາຍໃຕ້ກົດໝາຍການລົງໂທດການຕົວະ, ຈະຖືກໂທດຈຳຄຸກບໍ່ເກີນ 5 ປີ, ປັບໃໝບໍ່ເກີນ $10,000, ຫຼືທັງສອງ

**ເຊັນຊື່ບ່ອນນີ້: X**_____________________________________________ **ລົງວັນທີ:** ________-________- 20________

## Election Judge Official Use Only

☐ IP
☐ M
☐ AB

W__________
P__________
SD_________
Initials_______

**ID with Current Name & Address**
ID Number:
_______________________________
☐ MN Driver's License, Learner's Permit, MN ID Card, or Receipt
☐ Tribal ID Card

**Photo ID + Document with Current Name & Address**
Document Type:_______________________________
Photo ID Number:_____________________________
☐ Driver's License, Learner's Permit or State ID Card
☐ U.S. Passport ☐ U.S. Military ID
☐ Tribal ID ☐ Student ID

**Other**
☐ Vouched For
☐ Notice of Late Registration
☐ Valid Registration in Same Precinct
☐ ID with College List
*Record ID type and number using form to the left

# ຈະສົ່ງກັບຄືນຄໍາຮ້ອງສະໝັກນີ້ໄປບ່ອນໃດ

ສົ່ງແບບຟອມນີ້ທາງໄປສະນີຫຼືສົ່ງກັບຄືນດ້ວຍຕົວເອງທີ່:

Secretary of State
First National Bank Building
332 Minnesota Street, Suite N201
Saint Paul, MN 55101

### ຂໍ້ມູນກໍານົດສົ່ງຄືນ

ເຮົາແນະນໍາໃຫ້ທ່ານລົງທະບຽນກ່ອນວັນເລືອກຕັ້ງ - ມັນຈະຊ່ວຍປະຢັດເວລາທີ່ທ່ານຈະໃຊ້ຢູ່ໃນສະຖານທີ່ເລືອກຕັ້ງ. ກໍານົດມື້ສຸດທ້າຍຂອງການລົງທະບຽນລ່ວງໜ້າແມ່ນ 21 ມື້ກ່ອນວັນເລືອກຕັ້ງ ຖ້າບໍ່ດັ່ງນັ້ນ ທ່ານສາມາດລົງທະບຽນໃນວັນເລືອກຕັ້ງທີ່ສະຖານທີ່ເລືອກຕັ້ງຂອງທ່ານ ໄປທີ່ mnvotes.govເພື່ອເບິ່ງວ່າມີເອກກະສານແລະ / ຫຼືບັດປະຈໍາຕົວໃດທີ່ທ່ານຈະຕ້ອງເອົາມານໍາ

ຄໍາຮ້ອງສະໝັກທີ່ບຸກຄົນທີສາມເປັນຜູ້ເກັບກໍາຈະຕ້ອງໄດ້ນໍາສົ່ງໃຫ້ສໍານັກງານລັດຖະມົນຕີ ຫຼືສໍານັກງານການເລືອກຕັ້ງຂອງຄາວຕີ້ໄດ້ຮັບພາຍໃນ 10 ວັນນັບແຕ່ເວລາທີ່ຜູ້ລົງຄະແນນໄດ້ເຊັນຊື່ແລະລົງວັນທີໃນຄໍາຮ້ອງສະໝັກ

### ການຊ່ວຍເຫຼືອ

ພວກເຮົາມີໃບສະໝັກ ທີ່ມີຕົວໜັງສືຂະໜາດໃຫຍ່ໃຫ້ທ່ານຕາມຄໍາຮ້ອງຂໍຈາກຜູ້ກວດກາບັນຊີຂອງຄາວຕີ້ ຫຼື ຈາກສໍານັກງານຂອງເວຂານຸການຂອງລັດ. ພວກເຮົາມີການຊ່ວຍເຫຼືອພິເສດ ແກ່ຄົນຊະລາ, ຄົນພິການ, ຫຼືຄົນທີ່ຢູ່ໃນສະຖານພະຍາບານຕ່າງໆ. ສໍາລັບຂໍ້ມູນເພີ່ມເຕີມ ກະລຸນາຕິດຕໍ່ກັບສໍານັກງານຂອງເວຂານຸການປະຈໍາລັດມິນນີໂຊຕາ ຫຼື ຜູ້ກວດກາບັນຊີຂອງຄາວຕີ້ຂອງທ່ານ. ທ່ານຈະຂໍໃບສະໝັກທີ່ເປັນພາສາຕ່າງປະເທດໄດ້ທີ່ mnvotes.gov

### ແຈ້ງການຄວາມເປັນສ່ວນຕົວ

ວັນເດືອນປີເກີດຂອງທ່ານ, ອີເມວ, ແລະເລກປະຈໍາຕົວໃດທີ່ທ່ານໃຫ້ໄວ້ (ໃບຂັບຂີ່ຂອງລັດມິນນີໂຊຕາ, ບັດປະຈໍາຕົວຂອງລັດ, ບັດປະຈໍາຕົວຂອງລັດ ຫຼືເລກປະກັນສັງຄົມສີໂຕສຸດທ້າຍ) ເປັນຂໍ້ມູນສ່ວນຕົວ ມີພຽງແຕ່ພະນັກງານການເລືອກຕັ້ງແລະອົງການລັດຖະບານທີ່ໄດ້ຮັບອະນຸຍາດອື່ນໆເທົ່ານັ້ນຈະເຂົ້າໄປເບິ່ງໄດ້

ພະນັກງານການເລືອກຕັ້ງໃຊ້ວັນເດືອນປີເກີດແລະເລກບັດປະຈໍາຕົວຂອງທ່ານເພື່ອຢືນຢັນຕົວຕົນຂອງທ່ານກັບກະຊວງຄວາມປອດໄພສາທາລະນະ ຫຼື ອົງການບໍລິຫານປະກັນສັງຄົມ ຖ້າຫາກວ່າທ່ານມີເລກປະຈໍາຕົວແຕ່ທ່ານປະຕິເສດທີ່ຈະໃຫ້ ຄໍາຮ້ອງສະໝັກຂອງທ່ານອາດຈະບໍ່ຄົບຖ້ວນແລະທ່ານອາດຈະຕ້ອງໄດ້ສະໝັກອີກເທື່ອໜຶ່ງຫຼືຕ້ອງສະແດງຫຼັກຖານທີ່ຢູ່ອາໄສໃຫ້ເຫັນກ່ອນທີ່ທ່ານຈະສາມາດລົງຄະແນນສຽງ

ພະນັກງານການເລືອກຕັ້ງຖາມຫາອີເມວຂອງທ່ານເພື່ອວ່າເຂົາເຈົ້າຈະໄດ້ຕິດຕໍ່ທ່ານກ່ຽວກັບຄໍາຮ້ອງສະໝັກຂອງທ່ານ ຫ້ອງການລັດຖະມົນຕີອາດຈະອີເມວຫາທ່ານ (ຫຼືຕິດຕໍ່ທ່ານວິທີການອື່ນ) ກ່ຽວກັບການລົງຄະແນນສຽງແລະການເລືອກຕັ້ງ, ຫຼືຖາມຄວາມຄິດເຫັນຂອງທ່ານເປັນສາທາລະນະກ່ຽວກັບການເລືອກຕັ້ງຫຼືກ່ຽວກັບການບັນຫາການເລືອກຕັ້ງທີ່ກ່ຽວຂ້ອງ

ຂໍ້ມູນສ່ວນທີ່ເຫຼືອໃນຄໍາຮ້ອງສະໝັກຂອງທ່ານແມ່ນຂໍ້ມູນສາທາລະນະໃນເວລາທີ່ນໍາໄປໃຊ້ໃນການເລືອກຕັ້ງ, ທາງດ້ານການເມືອງ ຫຼືເພື່ອວັດຖຸປະສົງໃນການບັງຄັບໃຊ້ກົດໝາຍ ຖ້າຫາກວ່າທ່ານຕ້ອງການທີ່ຈະຮັກສາຂໍ້ມູນສ່ວນຕົວຂອງທ່ານໃຫ້ເປັນສ່ວນຕົວ ເນື່ອງຈາກວ່າມີຄວາມກັງວົນດ້ານຄວາມປອດໄພສ່ວນບຸກຄົນ ໃຫ້ໂທຫາ 1-877-600-8683

### ຂໍ້ມູນການລົງຄະແນນສຽງເພີ່ມເຕີມ

ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບການລົງຄະແນນສຽງ, ການລົງທະບຽນເພື່ອລົງຄະແນນສຽງ, ການຊອກຫາສະຖານທີ່ຂອງທ່ານ, ຜົນການເລືອກຕັ້ງຂອງລັດ, ຂໍ້ມູນການແຂ່ງເລືອກຕັ້ງ, ຫຼືການດໍາເນີນການເລືອກຕັ້ງ, ໄປທີ່ເວັບໄຊຂອງລັດຖະມົນຕີຂອງລັດທີ່ mnvotes.gov ຫຼື ໂທຟຣີ 1-877-600-VOTE (1-877-600-8683) ສໍາລັບການສື່ສານສາຍໂທ TTY / TTD (ຄົນຫູໜວກແລະຍາກໃນການໄດ້ຍິນ) ໃຫ້ຕິດຕໍ່ບໍລິການຣີເລ
ຂອງລັດມິນນີໂຊຕາທີ່ 1-800-627-3529 ຫຼື 711